Produced by NSW HEALTH DEPARTMENT

multicultural communication

Lao
February 2004
[DOH-7120]

# ໂຣກເກີດຈາກອາຫານເປັນພິດ

## Foodborne Disease

ໂຣກເກີດຈາກອາຫານເປັນພິດແມ່ນຫຍັງ?

ໂຣກເກີດຈາກອາຫານເປັນພິດ (ອາຫານເບື່ອ) ເກີດຈາກການບໍຣິໂພກອາຫານຫຼືນ້ຳທີ່ເປັນພິດ. ໂຣກນີ້ເກີດຂຶ້ນເລື້ອຍ, ມີການສັນນິຖານວ່າເກີດຂຶ້ນປະມານ 5.4 ລ້ານກໍຣະນີຕໍ່ປີ ໃນປະເທດອອສເຕຣເລັຍ.

ມີມູນເຫດສາມຢ່າງທີ່ອາດກໍ່ໃຫ້ເກີດການເຈັບປ່ວຍໄດ້ຈາກອາຫານ: ເຊື້ອແບັກທີເຣັຍ, ເຊື້ອໄວຣັສ, ແລະສານພິດໃນອາຫານ (ຊຶ່ງອາດເກີດຂຶ້ນໄດ້ໂດຍທັມມະຊາດ ຫຼື ເກີດຂຶ້ນໂດຍມີການນຳເຊື້ອມາໃສ່ອາຫານນັ້ນ).

ອາຫານເປັນພິດອາດເກີດຂຶ້ນໄດ້ກັບອາຫານທຸກໆຊນິດ, ບໍ່ວ່າຈະແມ່ນອາຫານຜລິດຫຼືອາຫານທີ່ກຽມຢູ່ເຮືອນ, ຢູ່ໂຮງຮຽນ, ຕາມສູນການຄ້າໃຫຍ່ໃນເຂດທ້ອງຖິ່ນ, ຕາມຮ້ານຂາຍອາຫານທີ່ຊື້ອອກໄປກິນທາງນອກ (take away) , ຫຼືຕາມຮ້ານອາຫານ. ເປີເຊັນທີ່ອາຫານຈະເປັນພິດຈະລົດນ້ອຍລົງ ຖ້າຫາກວ່າ ອາຫານນັ້ນໄດ້ຖືກເກັບຮັກສາໄວ້ ແລະ ກະກຽມຢ່າງຖືກຕ້ອງຕາມວິທີ.

ສາເຫດຂອງໂຣກອາຫານເປັນພິດແລະອາການຂອງໂຣກນີ້ມີຫຍັງແດ່?

ມີພຍາດຫຼາຍຢ່າງແລະມີອາການຫຼາຍຢ່າງແຕກຕ່າງກັນຊຶ່ງສາມາດເກີດຂຶ້ນໄດ້ຈາກການກິນອາຫານເບື່ອ.

ສາເຫດທົ່ວໆໄປແມ່ນເກີດຈາກ:

- ເຊື້ອແບັກທີເຣັຍ, ຕົວຢ່າງເຊື້ອ Salmonella, Campylobacter ແລະ Listeria;
- ເຊື້ອໄວຣັສ, ຕົວຢ່າງ ເຊື້ອ Norovirus ແລະ Hepatitis A;
- ສານພິດ, ຕົວຢ່າງ ສານພິດທີ່ເຊື້ອແບັກທີເຣັຍສ້າງຂຶ້ນເຊັ່ນ Staphylococcus aureus ຫຼື Bacillus cereus, ແລະ ciguatoxin.

ສ່ວນອາການກໍແຕກຕ່າງກັນໄປ, ຕາມແຕ່ວ່າເກີດຈາກສາເຫດຫຍັງ. ອາການຕ່າງໆອາດມີເຊັ່ນ: ຖ່າຍທ້ອງ, ຮາກ, ປັ້ນທ້ອງ, ເຈັບໃນຊ່ອງທ້ອງ, ແລະ ເປັນໄຂ້. ອາການຢ່າງອື່ນກໍອາດມີເຊັ່ນ

ເຈັບທ້ອງ, ເປັນໂຣກເຫຼືອງ ແລະ ມີອາການມຶນຊາ. ອາດຈະໃຊ້ເວລາໃນລະຫວ່າງສອງສາມຊົ່ວໂມງ ເຖິງສອງສາມມື້ ຈຶ່ງອອກອາການເຫຼົ່ານີ້, ຫຼືອາດດົນກວ່ານັ້ນ, ແລະຕາມປົກກະຕິຈະເປັນຢູ່ປະມານ ສອງສາມມື້, ບາງເທື່ອກໍດົນກວ່ານັ້ນ.

## ແມ່ນໃຜແດ່ມີເປີເຊັນສ່ຽງສູງໃນການເປັນໂຣກນີ້?

ທຸກໆຄົນສາມາດເປັນໂຣກອາຫານເປັນພິດໄດ້. ຢ່າງໃດກໍດີ ມີບາງຄົນທີ່ມີເປີເຊັນສ່ຽງສູງຂຶ້ນ ທີ່ຈະ ເປັນເຖິງຂັ້ນເຈັບປ່ວຍຮ້າຍແຮງໄດ້. ຄົນເຫຼົ່ານັ້ນແມ່ນ:

- ເດັກນ້ອຍ;
- ຜູ້ສູງອາຍຸ;
- ຜູ້ທີ່ພູມຕ້ານທານບໍ່ແຂງແຮງ;
- ແມ່ຍິງຖືພາ.

## ຈະປ້ອງກັນພະຍາດນີ້ໄດ້ຢ່າງໃດ?

ໃຫ້ຮັກສາຄວາມສະອາດ

ລ້າງມືໃຫ້ສະອາດທົ່ວເຖິງດີດ້ວຍສະບູແລະນ້ຳກ໊ອກຢ່າງນ້ອຍ 15 ວິນາທີ ແລະ ເຊັດມືດ້ວຍຜ້າ ສະອາດຫຼັງຈາກໃຊ້ຫ້ອງນ້ຳ, ປ່ຽນຜ້າອ້ອມ, ແລະກ່ອນກິນ ຫຼື ກ່ອນກຽມອາຫານ. ຜູ້ທີ່ມີອາການທີ່ ເກີດຈາກໂຣກອາຫານເປັນພິດບໍ່ຄວນກຽມອາຫານໃຫ້ຄົນອື່ນກິນ.

## ການຄວບຄຸມອຸນຫະພູມ

ການເກັບຮັກສາອາຫານດ້ວຍອຸນຫະພູມທີ່ບໍ່ຖືກຕ້ອງສາມາດເຮັດໃຫ້ເກີດການຂະຫຍາຍຕົວຂອງເຊື້ອ ແບັກທີເຣັຍທີ່ເປັນສາເຫດໃຫ້ອາຫານເບື່ອ, ຊຶ່ງຈະຂະຫຍາຍໃນອຸນຫະພູມລະຫວ່າງ 5°C ແລະ 60°C. ເພື່ອເປັນການລະມັດລະວັງ ຄວນເຮັດດັ່ງນີ້:

- ອຸນຫະພູມຂອງຕູ້ເຢັນບໍ່ຄວນເກີນ 5°C ແລະຄວນມີອາກາດໝູນວຽນພຽງພໍຕາມອ້ອມຮອບ ອາຫານ ເພື່ອໃຫ້ອຸນຫະພູມສມ່ຳສເມີທົ່ວກັນ;
- ອາຫານຮ້ອນຄວນເກັບໄວ້ໃນອຸນຫະພູມເກີນ 60°C;
- ເມື່ອອຸ່ນອາຫານຄືນຄວນອຸ່ນໂດຍໄວຈົນທຸກໆພາກສ່ວນຂອງອາຫານຮ້ອນຮອດ 75°C;
- ອາຫານແຊ່ແຂງຄວນເຮັດໃຫ້ເປື່ອຍໃນຕູ້ເຢັນຫຼືໃຊ້ເຕົາໄມໂຄຣເວຟ. ອາຫານດິບທີ່ປະໄວ້ ໃນຫ້ອງອຸນຫະພູມທັມມະດານັ້ນ ຍິ່ງປະໄວ້ດົນປານໃດ ເຊື້ອແບັກທີເຣັຍກໍຍິ່ງຂະຫຍາຍຕົວໄວ ຂຶ້ນເທົ່ານັ້ນ ແລະ ອາດເຮັດໃຫ້ອາຫານເກີດມີສານພິດຂຶ້ນໄດ້;
- ຖ້າຢາກຂ້າເຊື້ອພະຍາດຢູ່ທາງໃນອາຫານ, ຕ້ອງເຮັດໃຫ້ສຸກຢ່າງທົ່ວເຖິງ.

ການເກັບຮັກສາອາຫານ

ຊີ້ນດິບ, ປາດິບ, ເປັດໄກ່ດິບ, ແລະ ຜັກດິບ ອາດມີເຊື້ອແບັກທີເຣັຍຈຳນວນຫຼວງຫຼາຍ, ແລະ ສາມາດນຳເຊື້ອໂຣກໄປໃສ່ອາຫານທີ່ພ້ອມຈະກິນໄດ້ ຖ້າຫາກວ່າອາຫານເຫຼົ່ານັ້ນ ບໍ່ໄດ້ຖືກເກັບຮັກສາ ຫຼື ຈັບບາຍຢ່າງຣະມັດຣະວັງ. ເພື່ອເປັນການຣະມັດຣະວັງຄວນເຮັດດັ່ງນີ້:

- ອາຫານດິບຄວນເກັບໄວ້ໃນກ່ອງທີ່ມີຝາປິດແໜ້ນແລະເກັບຢູ່ທາງລຸ່ມຂອງອາຫານທີ່ພ້ອມຈະກິນໄດ້ ເພື່ອປ້ອງກັນບໍ່ໃຫ້ມັນເກີດເບື່ອຂຶ້ນມາ;
- ຄວນລ້າງມືທັນທີຫຼັງຈາກຈັບອາຫານດິບແລະກ່ອນຈັບອາຫານສຸກຫຼືອາຫານທີ່ພ້ອມຈະກິນໄດ້;
- ຄວນໃຊ້ຂຽງ, ເຄື່ອງຕັກອາຫານ ແລະ ຈານອັນຕ່າງກັນສຳລັບອາຫານດິບ ແລະ ອາຫານທີ່ພ້ອມຈະກິນໄດ້. ຖ້າຈະໃຊ້ຂຽງອັນດຽວກັນຄວນລ້າງດ້ວຍສະບູແລະນ້ຳຮ້ອນໃຫ້ດີກ່ອນນຳມາໃຊ້ອີກ;
- ໃຫ້ລ້າງຜັກດິບໃຫ້ສະອາດດີທົ່ວເຖິງ ກ່ອນເອົາມາປຸງແລະເອົາມາກິນ;
- ອາຫານທຸກຊນິດຄວນເກັບໄວ້ຢ່າງຣະມັດຣະວັງໃຫ້ຫ່າງຈາກສານເບື່ອເຄມີ, ຢາສີດຂ້າແມງໄມ້, ນ້ຳຢາທຳຄວາມສະອາດ, ໆລໆ;
- ຜ້າທີ່ໃຊ້ເຊັດຈານບໍ່ຄວນເອົາມາໃຊ້ເຊັດມືຫຼືເຊັດໜ້າໂຕະຄົວກິນ. ຜ້ານີ້ຄວນຊັກແລະຕາກໃຫ້ແຫ້ງເປັນປະຈຳ;
- ຜ້າເຊັດມືຄວນຂ້າເຊື້ອຢ່າງສມ່ຳສເມີ ແລະ ປ່ຽນໃໝ່ເລື້ອຍໆ.

ຖ້າສົງສັຍກ່ຽວກັບຄຸນນະພາບຫຼືຄວາມປອດພັຍຂອງອາຫານຢ່າງໃດຢ່າງນຶ່ງ, ໃຫ້ຖືເອົາຄວາມເວົ້າບູຮານມາໃຊ້, "ຖ້າສົງສັຍ, ໃຫ້ເອົາຖິ້ມ".

## ຣາຍລະອຽດເພີ້ມເຕີມ - **Public Health Units in NSW** (ໜ່ວຍອະນາມັຍສາທາຣະນະໃນຣັດ NSW)

ຖ້າຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ໜ່ວຍອະນາມັຍສາທາຣະນະທ້ອງຖິ່ນ ຫຼື ສູນອະນາມັຍຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ 'NSW Government' ທາງໜ້າຂອງປື້ມໂທຣະສັບ ຫົວຂາວ.

### ເຂດໃນຕົວເມືອງ

| | |
|---|---|
| Central Sydney | 9515 3180 |
| South Eastern Sydney | 9382 8333 |
| Northern Sydney | 9477 9400 |
| South Western Sydney | 9828 5944 |
| Western Sydney | 9840 3603 |
| Wentworth | 4734 2022 |

ເຂດຊິນນະບິດ

| | |
|---|---|
| Central Coast | 4349 4845 |
| Mid North Coast | 6588 2750 |
| Mid Western | 6339 5548 |
| Hunter | 4924 6477 |
| Illawarra | 4255 2200 |
| New England | 6766 2288 |
| Northern Rivers | 6620 7500 |
| Macquarie | 6841 2216 |
| Southern | 4827 3428 |
| Greater Murray | 6021 4799 |
| Far West | (08) 8080 1499 |

**NSW Department of Health**
73 Miller Street
North Sydney NSW 2059
Tel. (02) 9391 9000
Fax. (02) 9391 9101
TTY. (02) 9391 9900

NSW Health website
www.health.nsw.gov.au